**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0019 /ອຄ
ນະຄອນຫຼວງວຽງຈັນ, ວັນທີ 06 ມັງກອນ 2025

# ຂໍ້ຕົກລົງ
# ວ່າດ້ວຍການປະຕິບັດວຽກງານກວດກາການຄ້າ

- ອີງຕາມ ກົດໝາຍ ວ່າດ້ວຍການປົກປ້ອງຜູ້ຊົມໃຊ້ ສະບັບເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2010;
- ອີງຕາມ ກົດໝາຍ ວ່າດ້ວຍການແຂ່ງຂັນທາງທຸລະກິດ ສະບັບເລກທີ 60/ສພຊ, ລົງວັນທີ 15 ກໍລະກົດ 2015;
- ອີງຕາມ ດຳລັດ ວ່າດ້ວຍການກວດກາການຄ້າ ສະບັບເລກທີ 508/ລບ, ລົງວັນທີ 04 ທັນວາ 2012;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 275/ນຍ, ລົງວັນທີ 01 ກັນຍາ 2023;
- ອີງຕາມ ໜັງສືສະເໜີຂອງກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ສະບັບເລກທີ 467/ກຂກຄ, ລົງວັນທີ 29 ພະຈິກ 2024.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ:**

## ໝວດທີ1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບການເຄື່ອນໄຫວ, ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ການຄ້າ, ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາການຄ້າ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການ ແນໃສ່ສົ່ງເສີມການແຂ່ງຂັນທາງທຸລະກິດ ແລະ ປົກປ້ອງຫົວໜ່ວຍທຸລະກິດການຄ້າ ຕາມກົນໄກເສດຖະກິດຕະຫຼາດ ທີ່ມີການຄຸ້ມຄອງຂອງລັດ, ສົ່ງເສີມການຜະລິດສິນຄ້າ ປະກອບສ່ວນເຂົ້າໃນການຄຸ້ມຄອງສິນຄ້າ, ລາຄາ, ການແຂ່ງຂັນທີ່ເປັນທຳ ແລະ ປົກປ້ອງສິດຜົນປະໂຫຍດຂອງຜູ້ຊົມໃຊ້.

**ມາດຕາ 2 ການປະຕິບັດວຽກງານກວດກາການຄ້າ**

ການປະຕິບັດວຽກງານກວດກາການຄ້າ ແມ່ນການເຄື່ອນໄຫວວຽກງານຂອງເຈົ້າໜ້າທີ່ການຄ້າ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຕາມແຕ່ລະຂັ້ນ ໃນການຕິດຕາມ, ກວດກາ, ປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາການຄ້າ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

**1. ເຈົ້າໜ້າທີ່ການຄ້າ** ໝາຍເຖິງ ເຈົ້າໜ້າທີ່ແຂ່ງຂັນທາງທຸລະກິດ, ເຈົ້າໜ້າທີ່ປົກປ້ອງຜູ້ຊົມໃຊ້ ແລະ ເຈົ້າໜ້າທີ່ກວດກາການຄ້າ ທີ່ໄດ້ຮັບການແຕ່ງຕັ້ງຕາມກົດໝາຍ ແລະ ລະບຽບການ;

**2. ພະນັກງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ** ໝາຍເຖິງ ລັດຖະກອນ ທີ່ເຮັດໜ້າທີ່ ກ່ຽວກັບວຽກງານແຂ່ງຂັນທາງທຸລະກິດ, ປົກປ້ອງຜູ້ຊົມໃຊ້, ກວດກາການຄ້າ ແລະ ແກ້ໄຂການລະເມີດທາງການຄ້າ ທີ່ສັງກັດໃນຂະແໜງການອຸດສາຫະກໍາ ແລະ ການຄ້າ;

**3. ແຫຼ່ງຂ່າວ** ໝາຍເຖິງ ການໄດ້ຮັບຂໍ້ມູນຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການລະເມີດກົດໝາຍ ແລະ ລະບຽບ ກ່ຽວກັບວຽກງານກວດກາການຄ້າ.

## ໝວດທີ 2
## ໂຄງປະກອບ, ການແຕ່ງຕັ້ງ, ປົດຕໍາແໜ່ງ ແລະ ສັບຊ້ອນ ເຈົ້າໜ້າທີ່ການຄ້າ

**ມາດຕາ 4 ໂຄງປະກອບຂອງພະນັກງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ**

**ພະນັກງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ** ປະກອບມີ ສາມ ຂັ້ນ ດັ່ງນີ້:

1. ຂັ້ນສູນກາງ ປະກອບມີ: ລັດຖະມົນຕີ, ຮອງລັດຖະມົນຕີ ຜູ້ຊີ້ນໍາວຽກງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ, ຫົວໜ້າກົມ, ຮອງຫົວໜ້າກົມ ແລະ ພະນັກງານ ສັງກັດຢູ່ກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ;

2. ຂັ້ນແຂວງ ປະກອບມີ: ຫົວໜ້າພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຮອງຫົວໜ້າພະແນກອຸດສາຫະກໍາ ແລະ ການຄ້າ ຜູ້ຊີ້ນໍາວຽກງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ແລະ ພະນັກງານ ທີ່ຮັບຜິດຊອບວຽກງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ;

3. ຂັ້ນເມືອງ ປະກອບມີ: ຫົວໜ້າຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ, ຮອງຫົວໜ້າຫ້ອງການອຸດສາຫະກໍາ ແລະ ການຄ້າ ຜູ້ຊີ້ນໍາວຽກງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ແລະ ພະນັກງານ ທີ່ຮັບຜິດຊອບວຽກງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ.

**ມາດຕາ 5 ການແຕ່ງຕັ້ງ, ປົດຕໍາແໜ່ງ ແລະ ຊັບຊ້ອນ ຂອງພະນັກງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ**

ການແຕ່ງຕັ້ງ, ປົດຕໍາແໜ່ງ ແລະ ຊັບຊ້ອນ ເຈົ້າໜ້າທີ່ການຄ້າ ໃນແຕ່ລະຂັ້ນ ແມ່ນລັດຖະມົນຕີ ກະຊວງອຸດສາຫະກໍາ ແລະ ການຄ້າ ເປັນຜູ້ຕົກລົງ ຕາມແຕ່ລະຂັ້ນ ດັ່ງນີ້:

**1. ຂັ້ນສູນກາງ:** ກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ເປັນຜູ້ຄົ້ນຄວ້າ ແລະ ນໍາສະເໜີ ລັດຖະມົນຕີ ເພື່ອພິຈາລະນາ ອອກຂໍ້ຕົກລົງ ໂດຍຜ່ານກົມຈັດຕັ້ງ ແລະ ພະນັກງານ;

**2. ຂັ້ນແຂວງ:** ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ສະເໜີຕໍ່ກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ເປັນຜູ້ຄົ້ນຄວ້າ ແລະ ນໍາສະເໜີ ລັດຖະມົນຕີ ເພື່ອພິຈາລະນາ ອອກຂໍ້ຕົກລົງ ໂດຍຜ່ານກົມຈັດຕັ້ງ ແລະ ພະນັກງານ;

**3. ຂັ້ນເມືອງ:** ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ ສະເໜີພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອໃຫ້ກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ເປັນຜູ້ຄົ້ນຄວ້າ ແລະ ນໍາສະເໜີ ລັດຖະມົນຕີ ພິຈາລະນາ ອອກຂໍ້ຕົກລົງ ໂດຍຜ່ານກົມຈັດຕັ້ງ ແລະ ພະນັກງານ.

**ມາດຕາ 6 ການມອບໝາຍ ຫຼື ແຕ່ງຕັ້ງເຈົ້າໜ້າທີ່ການຄ້າ**

ການມອບໝາຍ ຫຼື ແຕ່ງຕັ້ງ ເຈົ້າໜ້າທີ່ການຄ້າ ເພື່ອດຳເນີນການກວດກາການຄ້າ ຕາມແຕ່ລະຂັ້ນ ດັ່ງນີ້:

**1. ຂັ້ນສູນກາງ:**

- ຮອງລັດຖະມົນຕີ ຜູ້ຊີ້ນຳວຽກງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ເປັນຜູ້ມອບໝາຍ ຫຼື ແຕ່ງຕັ້ງ ສຳລັບການດຳເນີນການກວດກາການຄ້າ ສະເພາະຫຼາຍແຂວງ;
- ຫົວໜ້າກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ເປັນຜູ້ມອບໝາຍ ຫຼື ແຕ່ງຕັ້ງ ສຳລັບການດຳເນີນການກວດກາການຄ້າ ສະເພາະແຂວງໃດໜຶ່ງ.

**2. ຂັ້ນແຂວງ:** ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເປັນຜູ້ມອບໝາຍ ຫຼື ແຕ່ງຕັ້ງ ສຳລັບການດຳເນີນການກວດກາການຄ້າ ທີ່ຕິດພັນກັບສອງເມືອງ ຂຶ້ນໄປ.

**3. ຂັ້ນເມືອງ:** ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ເປັນຜູ້ມອບໝາຍ ຫຼື ແຕ່ງຕັ້ງ ສຳລັບການດຳເນີນການກວດກາການຄ້າ ໃນຂອບເຂດເມືອງ, ນະຄອນ ຂອງຕົນ.

**ມາດຕາ 7 ເງື່ອນໄຂຂອງເຈົ້າໜ້າທີ່ການຄ້າ**

ເຈົ້າໜ້າທີ່ການຄ້າ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີຄຸນສົມບັດສິນທຳປະຕິວັດ, ສັດຊື່ບໍລິສຸດ ຕໍ່ໜ້າທີ່ວຽກງານທີ່ຕົນຮັບຜິດຊອບ;
2. ມີຄວາມສາມາດ ຫຼື ຮັບຜິດຊອບວຽກງານທີ່ພົວພັນກັບການກວດກາໃນແຕ່ລະຄັ້ງ;
3. ເປັນລັດຖະກອນສົມບູນຂອງຂະແໜງການອຸດສາຫະກຳ ແລະ ການຄ້າ;
4. ບໍ່ເຄີຍຖືກລົງວິໄນ ຫຼື ຖືກລົງໂທດໃນສະຖານະສໍ້ໂກງ, ຍັກຍອກ ຫຼື ສໍ້ລາດບັງຫຼວງ;
5. ຜ່ານການຝຶກອົບຮົມ ກ່ຽວກັບວຽກງານກວດກາການຄ້າ.

**ມາດຕາ 8 ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ການຄ້າ ຂັ້ນສູນກາງ**

ເຈົ້າໜ້າທີ່ການຄ້າ ຂັ້ນສູນກາງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ດຳເນີນການກວດກາໃນຂອບເຂດທົ່ວປະເທດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ດຳລັດ ວ່າດ້ວຍການກວດກາການຄ້າ ແລະ ລະບຽບການ;

2. ກວດກາສາງ ຫຼື ສະຖານທີ່ເກັບມ້ຽນສິນຄ້າ ທີ່ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາການຄ້າ ໃນຂອບເຂດທົ່ວປະເທດ;

3. ບັນທຶກ ແລະ ລາຍງານຜົນການກວດກາ ແຕ່ລະຄັ້ງໃຫ້ຫົວໜ້າກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ເພື່ອພິຈາລະນານຳໃຊ້ມາດຕາການຕໍ່ຜູ້ລະເມີດ;

4. ຄຸ້ມຄອງເອກະສານ, ຫຼັກຖານ ຫຼື ຂອງກາງ ທີ່ຍຶດ ຫຼື ອາຍັດໄວ້ ເພື່ອລໍຖ້າຜົນຂອງການພິຈາລະນາຂອງຫົວໜ້າກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ;

5. ຊອກຮູ້, ສ້າງແຫຼ່ງຂ່າວ ເພື່ອຊ່ວຍຕິດຕາມ ແລະ ສະໜອງຂໍ້ມູນ ກ່ຽວກັບການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາການຄ້າ;

6. ປະສານສົມທົບກັບເຈົ້າໜ້າທີ່ການຄ້າ ຂັ້ນແຂວງ, ນະຄອນຫຼວງ, ຂັ້ນເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ທີ່ເຫັນວ່າມີຄວາມຈຳເປັນໃນການດຳເນີນການກວດກາ;

7. ນຳໃຊ້ອຸປະກອນ, ພາຫະນະ ເຂົ້າໃນການເຄື່ອນໄຫວກວດກາ ເປົ້າໝາຍກະທຳຜິດ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ ຫຼື ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 9 ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ການຄ້າ ຂັ້ນແຂວງ, ນະຄອນຫຼວງ**

ເຈົ້າໜ້າທີ່ການຄ້າ ຂັ້ນແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ດໍາເນີນການກວດກາ ໃນຂອບເຂດແຂວງ, ນະຄອນຫຼວງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ, ດໍາລັດ ວ່າດ້ວຍການກວດກາການຄ້າ ແລະ ລະບຽບການ;

2. ກວດກາສາງ ຫຼື ສະຖານທີ່ເກັບມ້ຽນສິນຄ້າ ທີ່ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການດ້ານການຄ້າ ໃນຂອບເຂດແຂວງ, ນະຄອນຫຼວງ ຂອງຕົນ;

3. ບັນທຶກ ແລະ ລາຍງານ ຜົນການກວດກາແຕ່ລະຄັ້ງ ໃຫ້ຫົວໜ້າພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ຂັ້ນຂອງຕົນ ເພື່ອພິຈາລະນາການນໍາໃຊ້ມາດຕາການຕໍ່ຜູ້ລະເມີດ;

4. ຄຸ້ມຄອງເອກະສານ, ຫຼັກຖານ ຫຼື ຂອງກາງ ທີ່ຍຶດ ຫຼື ອາຍັດໄວ້ ເພື່ອລໍຖ້າຜົນຂອງການພິຈາລະນາຂອງຫົວໜ້າພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ຂັ້ນຂອງຕົນ;

5. ຊອກຮູ້, ສ້າງແຫຼ່ງຂ່າວ ເພື່ອຊ່ວຍຕິດຕາມ ແລະ ສະໜອງຂໍ້ມູນກ່ຽວກັບການລະເມີດກົດໝາຍ ແລະ ລະບຽບການດ້ານການຄ້າ;

6. ປະສານສົມທົບກັບເຈົ້າໜ້າທີ່ການຄ້າ ຂັ້ນເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ທີ່ເຫັນວ່າມີຄວາມຈໍາເປັນໃນການດໍາເນີນການກວດກາ;

7. ນໍາໃຊ້ອຸປະກອນ, ພາຫະນະ ເຂົ້າໃນການເຄື່ອນໄຫວກວດກາ ເປົ້າໝາຍກະທໍາຜິດ;

8. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ ຫຼື ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 10 ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ການຄ້າ ຂັ້ນເມືອງ, ນະຄອນ**

ເຈົ້າໜ້າທີ່ກວດກາການຄ້າ ຂັ້ນເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ດໍາເນີນການກວດກາໃນຂອບເຂດເມືອງ, ນະຄອນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ, ດໍາລັດ ວ່າດ້ວຍການກວດກາການຄ້າ ແລະ ລະບຽບການ;

2. ກວດກາສາງ ຫຼື ສະຖານທີ່ເກັບມ້ຽນສິນຄ້າ ທີ່ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາການຄ້າ ໃນຂອບເຂດເມືອງ, ນະຄອນ ຂັ້ນຂອງຕົນ;

3. ບັນທຶກ ແລະ ລາຍງານ ຜົນການກວດກາແຕ່ລະຄັ້ງ ໃຫ້ຫົວໜ້າຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ ຂັ້ນຂອງຕົນ ເພື່ອພິຈາລະນານໍາໃຊ້ມາດຕາການຕໍ່ຜູ້ລະເມີດ;

4. ຄຸ້ມຄອງເອກະສານ, ຫຼັກຖານ ຫຼື ຂອງກາງທີ່ຍຶດ ຫຼື ອາຍັດໄວ້ ເພື່ອລໍຖ້າຜົນຂອງການພິຈາລະນາຂອງຫົວໜ້າຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ ຂອງຕົນ;

5. ຊອກຮູ້, ສ້າງແຫຼ່ງຂ່າວ ເພື່ອຊ່ວຍຕິດຕາມ ແລະ ສະໜອງຂໍ້ມູນ ກ່ຽວກັບການລະເມີດກົດໝາຍ ແລະ ລະບຽບການດ້ານການຄ້າ;

6. ປະສານສົມທົບກັບ ຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ທີ່ເຫັນວ່າມີຄວາມຈໍາເປັນໃນການດໍາເນີນການກວດກາ;

7. ນໍາໃຊ້ອຸປະກອນ, ພາຫະນະ ເຂົ້າໃນການເຄື່ອນໄຫວກວດກາເປົ້າໝາຍກະທໍາຜິດ;

8. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ ຫຼື ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

# ໝວດທີ 3
# ຂໍ້ຫ້າມ

**ມາດຕາ 11 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງມີພຶດຕິກຳ ດັ່ງນີ້:

1. ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່, ກົດໜ່ວງຖ່ວງດຶງ ແລະ ຂັດຂວາງ ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ການຄ້າ;

2. ໃຫ້ການຊ່ວຍເຫຼືອ, ປົກປ້ອງຜູ້ລະເມີດກົດໝາຍ ແລະ ລະບຽບການດ້ານການຄ້າ;

3. ເປັນສື່ກາງ, ໃຫ້ສິນບົນ ແລະ ຮັບສິນບົນ ເພື່ອຜົນປະໂຫຍດໃນວຽກງານກວດກາການຄ້າ;

4. ປອມຕົວ ແລະ ແອບອ້າງເປັນເຈົ້າໜ້າທີ່ການຄ້າ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 12 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ**

ຫ້າມ ຜູ້ດຳເນີນທຸລະກິດ ມີພຶດຕິກຳ ດັ່ງນີ້:

1. ລະເມີດກົດໝາຍ ແລະ ລະບຽບການດ້ານການຄ້າ;

2. ບໍ່ໃຫ້ຄວາມຮ່ວມມື, ຂັດຂວາງ, ສ້າງຄວາມຫຍຸ້ງຍາກ, ຂົ່ມຂູ່, ໃຊ້ຄຳຫຍາບຄາຍ, ໃຊ້ຄວາມຮຸນແຮງ ຫຼື ທຳຮ້າຍຮ່າງກາຍເຈົ້າໜ້າທີ່ການຄ້າ;

3. ສັບປ່ຽນ, ທຳລາຍ ຫຼື ເຮັດໃຫ້ຂອງກາງ ຫຼື ຫຼັກຖານເສຍຫາຍ;

4. ປອມແປງ, ດັດແປງເອກະສານ ທີ່ພົວພັນກັບການດຳເນີນການກວດກາການຄ້າ;

5. ມີພຶດຕິກຳອື່ນ ທີ່ລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 13 ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ການຄ້າ**

ຫ້າມ ສຳລັບພະນັກງານ ແລະ ເຈົ້າໜ້າທີ່ການຄ້າ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ຖານະຕຳແໜ່ງ ສິດອຳນາດ ແລະ ໜ້າທີ່ ເພື່ອຫາຜົນປະໂຫຍດສ່ວນຕົວ;

2. ເອົາບັດເຈົ້າໜ້າທີ່ການຄ້າ ຫຼື ເຄື່ອງແບບໃຫ້ບຸກຄົນອື່ນນຳໃຊ້ ໂດຍເຈດຕະນາ ຫຼື ບໍ່ເຈດຕະນາ;

3. ເອົາອາວຸດທີ່ໄດ້ຮັບການມອບໝາຍໃຫ້ບຸກຄົນອື່ນນຳໃຊ້ ໂດຍເຈດຕະນາ ຫຼື ບໍ່ເຈດຕະນາ;

4. ບໍ່ປະຕິບັດຕາມຂັ້ນຕອນການດຳເນີນການກວດກາການຄ້າ ຕາມທີ່ໄດ້ກຳນົດໄວ້ໃນ ດຳລັດວ່າດ້ວຍການກວດກາການຄ້າ;

5. ໃສ່ຊຸດເຄື່ອງແບບຂອງເຈົ້າໜ້າທີ່ການຄ້າ ໄປເຮັດວຽກສ່ວນຕົວ;

6. ສັບປ່ຽນ, ທຳລາຍ ຫຼື ເຮັດໃຫ້ຂອງກາງ ຫຼື ຫຼັກຖານເສຍຫາຍ;

7. ມີພຶດຕິກຳອື່ນ ທີ່ລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ການຈັດຕັ້ງປະຕິບັດວຽກງານກວດກາການຄ້າ

**ມາດຕາ 14 ການຈັດຕັ້ງປະຕິບັດວຽກງານກວດກາການຄ້າ**

ການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ຂອງຂະແໜງການອຸດສາຫະກຳ ແລະ ການຄ້າ ປະກອບມີ ສາມ ຂັ້ນ ຄື:

1. ຂັ້ນສູນກາງ: ກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ.
2. ຂັ້ນແຂວງ: ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ.
3. ຂັ້ນເມືອງ: ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ.

**ມາດຕາ 15 ສິດ ແລະ ໜ້າທີ່ ຂອງກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ**

ກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບວຽກງານກວດກາການຄ້າ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;
2. ເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ;
3. ຊີ້ນຳ, ນຳພາ, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ຂັ້ນທ້ອງຖິ່ນ ໃນຂອບເຂດທົ່ວປະເທດ;
4. ຄົ້ນຄວ້ານຳສະເໜີ ແຕ່ງຕັ້ງ, ປົດຕຳແໜ່ງ ແລະ ຊັບຊ້ອນ ເຈົ້າໜ້າທີ່ການຄ້າ ຕໍ່ລັດຖະມົນຕີ ຕາມການສະເໜີຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;
5. ມອບໝາຍ ຫຼື ແຕ່ງຕັ້ງເຈົ້າໜ້າທີ່ການຄ້າ ດຳເນີນການກວດກາສະເພາະແຂວງໃດໜຶ່ງ;
6. ສ້າງຄວາມເຂັ້ມແຂງ ກ່ຽວກັບວຽກງານກວດກາການຄ້າ ໃຫ້ແກ່ເຈົ້າໜ້າທີ່ການຄ້າ ເປັນຕົ້ນ ການຈັດຝຶກອົບຮົມ, ທັດສະນະສຶກສາ, ການແລກປ່ຽນບົດຮຽນ ຢູ່ພາຍໃນ ແລະ ຕ່າງປະເທດ;
7. ຈັດສັນ, ສະໜອງຄວາມຕ້ອງການ ແລະ ຄຸ້ມຄອງການນຳໃຊ້ ນຳໃຊ້ເຄື່ອງແບບ, ກາໝາຍ, ແບບພິມ, ບັດເຈົ້າໜ້າທີ່ການຄ້າ, ພາຫະນະ ແລະ ອຸປະກອນຮັບໃຊ້ທີ່ຈຳເປັນ;
8. ປະສານສົມທົບກັບ ເຈົ້າໜ້າທີ່ການຄ້າ ແຂວງ, ນະຄອນຫຼວງ, ຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດວຽກງານກວດກາການຄ້າ;
9. ຕິດຕາມ, ກວດກາ, ຕ້ານ ແລະ ສະກັດກັ້ນການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
10. ກວດກາຕາມປົກກະຕິ, ຕາມຄຳສັ່ງ ແລະ ຕາມແຫຼ່ງຂ່າວ ຫຼື ຕາມການສະເໜີ;
11. ປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາການຄ້າ ໃນຂອບເຂດທົ່ວປະເທດ;
12. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳຮ້ອງ, ຄຳສະເໜີ ກ່ຽວກັບການລະເມີດລະບຽບການດ້ານການຄ້າ ຫຼື ຜູ້ທີ່ບໍ່ໄດ້ຮັບຄວາມເປັນທຳຈາກການກະທຳທີ່ບໍ່ຖືກຕ້ອງຂອງພະນັກງານ ແລະ ເຈົ້າໜ້າທີ່ການຄ້າ;
13. ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ປະຈຳ ເດືອນ, ສາມ ເດືອນ, ຫົກເດືອນ, ເກົ້າ ເດືອນ ແລະ ປີ ຕໍ່ຂັ້ນເທິງຮັບຊາບ;
14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ ຫຼື ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 16 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ;

2. ຈັດຕັ້ງປະຕິບັດນິຕິກຳ, ສ້າງແຜນການ ແລະ ໃຊ້ມາດຕະການຕ່າງໆ ໃນການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ໃນຂອບເຂດແຂວງ, ນະຄອນຫຼວງ ຂອງຕົນ;

3. ຊີ້ນຳ, ນຳພາ, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ຂັ້ນເມືອງ, ນະຄອນ ໃນຂອບເຂດແຂວງຂອງຕົນ;

4. ຄົ້ນຄວ້າ ແລະ ນຳສະເໜີ ແຕ່ງຕັ້ງ, ປົດຕຳແໜ່ງ ແລະ ຊັບຊ້ອນ ເຈົ້າໜ້າທີ່ການຄ້າ ຕໍ່ກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ຕາມການສະເໜີຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ;

5. ແຕ່ງຕັ້ງເຈົ້າໜ້າທີ່ການຄ້າ ໃນຂັ້ນຂອງຕົນ ສົມທົບກັບເຈົ້າໜ້າທີ່ການຄ້າເມືອງ, ນະຄອນ ເພື່ອດຳເນີນການເຄື່ອນໄຫວ, ຕິດຕາມ ກວດກາ ໃນຂອບເຂດແຂວງ, ນະຄອນຫຼວງ ຂອງຕົນ;

6. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ໃນຂອບເຂດແຂວງ, ນະຄອນຫຼວງ ຂອງຕົນ;

7. ຕິດຕາມ, ກວດກາ, ຕ້ານ ແລະ ສະກັດກັ້ນ ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

8. ສັງລວມຄວາມຕ້ອງການນຳໃຊ້ເຄື່ອງແບບ, ກາໝາຍ, ແບບພິມ ແລະ ບັດເຈົ້າໜ້າທີ່ການຄ້າ ສະເໜີຕໍ່ກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ເພື່ອພິຈາລະນາ;

9. ຄຸ້ມຄອງການນຳໃຊ້ເຄື່ອງແບບ, ກາໝາຍ, ແບບພິມ ແລະ ບັດເຈົ້າໜ້າທີ່ການຄ້າ, ພາຫະນະ ແລະ ອຸປະກອນຮັບໃຊ້ທີ່ຈຳເປັນ ພາຍໃນແຂວງ, ນະຄອນຫຼວງ ຂອງຕົນ;

10. ກວດກາຕາມປົກກະຕິ, ຕາມຄຳສັ່ງ ແລະ ຕາມແຫຼ່ງຂ່າວ ຫຼື ຕາມການສະເໜີ;

11. ປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາການຄ້າ ໃນຂອບເຂດແຂວງ, ນະຄອນຫຼວງ ຂອງຕົນ;

12. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳຮ້ອງ, ຄຳສະເໜີ ກ່ຽວກັບການລະເມີດວຽກງານກວດກາການຄ້າ ຫຼື ຜູ້ທີ່ໄດ້ຮັບຄວາມບໍ່ເປັນທຳຈາກການກະທຳທີ່ບໍ່ຖືກຕ້ອງຂອງພະນັກງານ ແລະ ເຈົ້າໜ້າທີ່ການຄ້າ ພາຍໃນແຂວງ, ນະຄອນຫຼວງ ຂອງຕົນ;

13. ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ຢູ່ໃນແຂວງ, ນະຄອນຫຼວງ ຂອງຕົນ ຕໍ່ຫ້ອງວ່າການປົກຄອງແຂວງ, ນະຄອນຫຼວງ ແລະ ກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ, ກະຊວງອຸດສາຫະກຳ ແລະ ການຄ້າ ປະຈຳເດືອນ, ສາມ ເດືອນ, ຫົກ ເດືອນ, ເກົ້າ ເດືອນ ແລະ ປີ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ ແລະ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 17 ສິດ ແລະ ໜ້າທີ່ ຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ**

ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ;

2. ຈັດຕັ້ງປະຕິບັດນິຕິກຳ, ສ້າງແຜນການ ແລະ ໃຊ້ມາດຕະການຕ່າງໆ ໃນການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ໃນຂອບເຂດເມືອງ, ນະຄອນ ຂອງຕົນ;

3. ຕິດຕາມ, ກວດກາ, ຕ້ານ ແລະ ສະກັດກັ້ນການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

4. ສະເໜີ ແຕ່ງຕັ້ງ, ປົດຕຳແໜ່ງ ແລະ ຊັບຊ້ອນ ເຈົ້າໜ້າທີ່ການຄ້າ ຕໍ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;

5. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ໃນຂອບເຂດເມືອງ, ນະຄອນ ຂອງຕົນ;

6. ສັງລວມຄວາມຕ້ອງການນຳໃຊ້ເຄື່ອງແບບ, ກາໝາຍ, ແບບພິມ ແລະ ບັດເຈົ້າໜ້າທີ່ການຄ້າ ໃຫ້ແກ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອສະເໜີຕໍ່ກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ພິຈາລະນາ;

7. ຄຸ້ມຄອງການນຳໃຊ້ເຄື່ອງແບບ, ກາໝາຍ, ແບບພິມ ແລະ ບັດເຈົ້າໜ້າທີ່ການຄ້າ, ພາຫະນະ ແລະ ອຸປະກອນຮັບໃຊ້ທີ່ຈຳເປັນ ພາຍໃນເມືອງ, ນະຄອນ ຂອງຕົນ;

8. ແຕ່ງຕັ້ງເຈົ້າໜ້າທີ່ການຄ້າ ພາຍໃນເມືອງ, ນະຄອນ ຂອງຕົນ ເພື່ອດຳເນີນການເຄື່ອນໄຫວ, ຕິດຕາມ ກວດກາໃນຂອບເຂດເມືອງ, ນະຄອນ ຂອງຕົນ;

9. ກວດກາຕາມປົກກະຕິ, ຕາມຄຳສັ່ງ ແລະ ຕາມແຫຼ່ງຂ່າວ ຫຼື ຕາມການສະເໜີ;

10. ປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາການຄ້າ ໃນຂອບເຂດເມືອງ, ນະຄອນ ຂອງຕົນ;

11. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳຮ້ອງ, ຄຳສະເໜີ ກ່ຽວກັບການລະເມີດວຽກງານກວດກາການຄ້າ ຫຼື ຜູ້ທີ່ໄດ້ຮັບຄວາມບໍ່ເປັນທຳຈາກການກະທຳທີ່ບໍ່ຖືກຕ້ອງ ຂອງພະນັກງານ ແລະ ເຈົ້າໜ້າທີ່ການຄ້າ ພາຍໃນເມືອງ, ນະຄອນ ຂອງຕົນ;

12. ສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານກວດກາການຄ້າໃນເມືອງ, ນະຄອນ ຂອງຕົນ ຕໍ່ອຳນາດການປົກຄອງເມືອງ, ນະຄອນ ແລະ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ປະຈຳເດືອນ, ສາມ ເດືອນ, ຫົກ ເດືອນ, ເກົ້າ ເດືອນ ແລະ ປີ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມການມອບໝາຍຂອງຂັ້ນເທິງ ຫຼື ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ມາດຕາການຕໍ່ຜູ້ລະເມີດ

**ມາດຕາ 18 ມາດຕາການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍ, ດຳລັດ ວ່າດ້ວຍການກວດກາການຄ້າ, ຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ຈະຖືກປະຕິບັດຕາມມາດຕະການ ກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ກໍລະນີ ໜັກ ຫຼື ເບົາ.

**ມາດຕາ 19 ມາດຕາການກ່າວເຕືອນ ແລະ ສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ມີລັກສະນະເບົາ ການຈັດຕັ້ງວຽກງານກວດກາການຄ້າ ຕ້ອງກ່າວເຕືອນ ແລະ ເຮັດບົດບັນທຶກໄວ້.

ກໍລະນີ ເປັນການລະເມີດຂໍ້ຫ້າມ ທີ່ບໍ່ເປັນການກະທຳຜິດດທາງອາຍາ ຫຼື ບໍ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມ ແຕ່ຜູ້ລະເມີດ ຫາກມີຄວາມຈິງໃຈລາຍງານ, ຮັບສາລະພາບຕໍ່ການກະທຳທີ່ບໍ່ຖືກຕ້ອງຂອງຕົນ ກໍ່ຈະຖືກສຶກສາອົບຮົມ ແລະ ເຮັດບັນທຶກໄວ້ຢ່າງເປັນລາຍລັກອັກສອນ.

**ມາດຕາ 20 ມາດຕາການປັບໃໝ ແລະ ມາດຕະການໂທດເພີ່ມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການດ້ານການຄ້າ ຈະຖືກມາດຕາການປັບໃໝ ແລະ ມາດຕາການໂທດເພີ່ມ ຕາມແຕ່ລະກໍລະນີ ດັ່ງນີ້:

**ກ. ການດຳເນີນທຸລະກິດ ທີ່ລະເມີດກົດໝາຍ ແລະ ລະບຽບການດ້ານການຄ້າ.**

ການດຳເນີນທຸລະກິດທີ່ລະເມີດ ກົດໝາຍ ແລະ ລະບຽບການດ້ານການຄ້າ ຈະຖືກປັບໃໝ ແຕ່ລະກໍລະນີ ດັ່ງນີ້:

1. ບໍ່ຕິດປ້າຍລາຄາສິນຄ້າ ມີໂທດປັບໃໝແຕ່ ຫ້າແສນກີບ ຫາ ໜຶ່ງລ້ານກີບ (500,000 ຫາ 1,000,000 ກີບ) ຕໍ່ຄັ້ງ, ຕໍ່ລາຍການ;
2. ແຈ້ງຂໍ້ມູນເທັດກ່ຽວກັບໂຄງປະກອບລາຄາ ຫຼື ຄັງແຮສຳຮອງ ມີໂທດປັບໃໝແຕ່ ໜຶ່ງລ້ານກີບ ຫາ ສາມລ້ານກີບ (1,000,000 ກີບ ຫາ 3,000,000 ກີບ) ຕໍ່ຄັ້ງ;
3. ນຳເອົາສິນຄ້າທີ່ມີໄວ້ໃນຄັງແຮສຳຮອງອອກຈຳໜ່າຍ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການອຸດສາຫະກຳ ແລະ ການຄ້າ ມີໂທດປັບໃໝແຕ່ ໜຶ່ງລ້ານກີບ ຫາ ສາມລ້ານກີບ (1,000,000 ກີບ ຫາ 3,000,000 ກີບ) ຕໍ່ຄັ້ງ, ຕໍ່ລາຍການ;
4. ບໍ່ແຈ້ງໂຄງປະກອບລາຄາ ມີໂທດປັບໃໝແຕ່ ໜຶ່ງລ້ານກີບ ຫາ ສາມລ້ານກີບ (1,000,000 ກີບ ຫາ 3,000,000 ກີບ) ຕໍ່ຄັ້ງ, ຕໍ່ລາຍການ;
5. ນຳໃຊ້ໂຄງປະກອບລາຄາ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງລາຄາ ມີໂທດປັບໃໝແຕ່ ໜຶ່ງລ້ານກີບ ຫາ ຫ້າລ້ານກີບ (1,000,000 ກີບ ຫາ 5,000,000 ກີບ) ຕໍ່ຄັ້ງ, ຕໍ່ລາຍການ;
6. ຢຸດ, ປະຕິເສດ ຫຼື ແກ່ຍາວເວລາການຈຳໜ່າຍ ຫຼື ການບໍລິການໂດຍບໍ່ມີເຫດຜົນ ໃນເມື່ອມີຄຳສັ່ງ ຈາກອົງການຄຸ້ມຄອງລາຄາ ມີໂທດປັບໃໝແຕ່ ໜຶ່ງລ້ານກີບ ຫາ ສາມລ້ານກີບ (1,000,000 ກີບ ຫາ 3,000,000 ກີບ) ຕໍ່ຄັ້ງ, ຕໍ່ລາຍການ;
7. ການໂຄສະນາສິນຄ້າທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ເຊັ່ນ: ບໍ່ຖືກກັບປະເພດ, ຊະນິດສິນຄ້າ, ຄຸນລັກສະນະ, ຄຸນນະພາບ, ມາດຕະຖານຂອງສິນຄ້າ ຈະຖືກປັບໃໝແຕ່ ຫ້າແສນກີບ ຫາ ຫ້າລ້ານກີບ (500,000 ກີບ ຫາ 5,000,000 ກີບ) ແລ້ວແຕ່ລະກໍລະນີ ພ້ອມທັງອາຍັດ ຫຼື ຍຶດສິນຄ້າດັ່ງກ່າວ ຫຼື ທຳລາຍຖິ້ມ. ສຳລັບການໂຄສະນາສິນຄ້າ ແລະ ການບໍລິການ ຜ່ານທາງເອເລັກໂຕນິກ ທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
8. ການໂຄສະນາສິນຄ້າມີລັກສະນະສຽດສີ ແລະ ໃສ່ຮ້າຍປ້າຍສີສິນຄ້າ ແລະ ການບໍລິການຂອງຜູ້ອື່ນ ຈະຖືກປັບໃໝແຕ່ ຫ້າແສນກີບ ຫາ ໜຶ່ງລ້ານກີບ (500,000 ກີບ ຫາ 1,000,000 ກີບ) ໃນກໍລະນີດັ່ງກ່າວນີ້ ຖ້າຫາກມີຝ່າຍໃດຝ່າຍໜຶ່ງມາຍື່ນສະເໜີ ຫຼື ຄຳຮ້ອງຈຶ່ງຈະດຳເນີນກວດກາ.
9. ບໍ່ຕິດສະຫຼາກ, ຕິດສະຫຼາກລາຄາບໍ່ຖືກຕ້ອງ ແລະ ບໍ່ມີສະຫຼາກເປັນພາສາລາວ ໂດຍສະເພາະສິນຄ້າທີ່ມີຄວາມສ່ຽງຕໍ່ຊີວິດ, ສຸຂະພາບ ແລະ ຄວາມປອດໄພຂອງຜູ້ຊົມໃຊ້ ຈະຖືກປັບໃໝແຕ່ ຫ້າແສນກີບ ຫາ ຫ້າລ້ານກີບ (500,000 ກີບ ຫາ 5,000,000 ກີບ) ຕໍ່ຄັ້ງ ຕໍ່ລາຍການ ຫຼື ອາຍັດ ຫຼື ຍຶດສິນຄ້າດັ່ງກ່າວ;

10. ປອມແປງສະຫຼາກ, ຜະລິດ ຫຼື ນໍາໃຊ້ສະຫຼາກປອມ ກ່ຽວກັບປະເພດສິນຄ້າ ຈະຖືກປັບໃໝແຕ່ ສອງແສນກີບ ຫາ ສອງລ້ານ ກີບ (200,000 ກີບ ຫາ 2,000,000 ກີບ) ຕໍ່ຄັ້ງ, ຕໍ່ລາຍການ ພ້ອມທັງອາຍັດ ຫຼື ຍຶດສິນຄ້າດັ່ງກ່າວ ແລະ ຈະຖືກດໍາເນີນຄະດີຕາມກົດໝາຍອາຍາ;

11. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍ ກ່ຽວກັບວຽກງານຊັບສິນທາງປັນຍາ ໂດຍເຈດຕະນາ ຫຼື ດ້ອຍຄວາມບໍ່ລະມັດລະວັງເປັນຄັ້ງທີສອງ ຊຶ່ງບໍ່ເປັນການກະທໍາຜິດທາງ ອາຍາ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍທີ່ໄດ້ກໍ່ຂຶ້ນ (ວັກ 1 ຂອງ ມາດຕາ 140 ກົດໝາຍວ່າດ້ວຍຊັບສິນທາງປັນຍາ ສະບັບເລກທີ 50/ສພຊ, ລົງວັນທີ 20 ພະຈິກ 2023);

12. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍ ກ່ຽວກັບວຽກງານຊັບສິນທາງປັນຍາ ເປັນຄັ້ງທີ ສອງ ໂດຍເຈດຕະນາ ຫຼື ເປັນອາຈິນ ຈະຖືກປັບໃໝ ຫ້າສ່ວນຮ້ອຍ (5%) ຂອງມູນ ຄ່າຄວາມເສຍຫາຍ ທີ່ໄດ້ກໍ່ຂຶ້ນໃນການລະເມີດແຕ່ລະຄັ້ງ (ວັກ 2 ຂອງ ມາດຕາ 140 ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ສະບັບເລກທີ 50/ສພຊ, ລົງວັນທີ 20 ພະຈິກ 2023);

13. ຂາຍ ຫຼື ສະໜອງອາຫານໃຫ້ແກ່ສັງຄົມບໍ່ມີຄວາມປອດໄພ, ບໍ່ໄດ້ມາດຕະຖານ, ເຈືອປົນ, ປົນ ເປື້ອນ, ໝົດອາຍຸການບໍລິໂພກ, ໂຄສະນາອາຫານເກີນຄວາມເປັນຈິງ, ຈູງໃຈ, ຊວນເຊື່ອ, ກ່າວ ອ້າງສັບພະຄຸນໃນການປິ່ນປົວເຮັດໃຫ້ຜູ້ບໍລິໂພກເຂົ້າໃນຜິດ ຈະຖືກອາຍັດ ຫຼື ຍຶດ ແລະ ປັບໃໝ ຕາມມູນຄ່າຂອງສິນຄ້າ ແລະ ສະເໜີໃຫ້ພາກສ່ວນກ່ຽວຂ້ອງ, ບໍ່ອະນຸຍາດໃຫ້ຜະລິດ, ນໍາເຂົ້າ ແລະ ຈໍລະຈອນຈໍາໜ່າຍຜະລິດຕະພັນນັ້ນ ຕາມກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ ກ່ຽວຂ້ອງ;

14. ການປະຕິບັດມາດຕະການຕໍ່ຜູ້ລະເມີດຄໍາສັ່ງ ວ່າດ້ວຍການຕິດສະຫຼາກສິນຄ້າເປັນພາສາລາວ ຂອງຜູ້ຜະລິດ, ຜູ້ນໍາເຂົ້າ, ຜູ້ຂາຍຍົກ ແລະ ຂາຍຍ່ອຍສິນຄ້າ ໃຫ້ຕິດສະຫຼາກສິນຄ້າເປັນພາສາ ລາວ ປະຕິບັດດັ່ງນີ້:

   - ລະເມີດຄັ້ງທີ ໜຶ່ງ ໃຫ້ຕັກເຕືອນ ແລະ ເຮັດບົດບັນທຶກ ແລະ ເຊັນຮັບຮູ້ການລະເມີດ;
   - ລະເມີດຄັ້ງທີ ສອງ ໃຫ້ດໍາເນີນການປັບໃໝ ແຕ່ ຫ້າແສນກີບ ຫາໜຶ່ງລ້ານກີບ (500,000 ກີບ ຫາ 1,000,000 ກີບ) ສໍາລັບຮ້ານຄ້າຍ່ອຍ, ແຕ່ ຫ້າລ້ານກີບ ຫາ ເຈັດລ້ານກີບ (5,000,000 ກີບ ຫາ 7,000,000 ກີບ) ສໍາລັບຜູ້ຜະລິດ, ຜູ້ນໍາເຂົ້າ, ຜູ້ຂາຍຍົກ ແລະ ຜູ້ເປັນຕົວແທນຈໍາໜ່າຍ;
   - ລະເມີດຄັ້ງທີ ສາມ ໃຫ້ດໍາເນີນການປັບໃໝແຕ່ ໜຶ່ງລ້ານກີບ ຫາ ສອງລ້ານກີບ (1,000,000 ກີບ ຫາ 2,000,000 ກີບ) ແລະ ອາຍັດສິນຄ້າທີ່ວາງຂາຍທີ່ບໍ່ໄດ້ຕິດສະ ຫຼາກສິນຄ້າເປັນພາສາລາວ (ສໍາລັບຮ້ານຄ້າຂາຍຍ່ອຍ), ແຕ່ເຈັດລ້ານກີບ ຫາ ເກົ້າລ້ານກີບ (7,000,000 ກີບ ຫາ 9,000,000 ກີບ) ພ້ອມທັງໃຫ້ໂຈະ ຫຼື ຍົກເລີກໃບທະບຽນວິ ສາຫະກິດ (ສໍາລັບຜູ້ຜະລິດ, ນໍາເຂົ້າ, ຂາຍຍົກ ແລະ ຜູ້ເປັນຕົວແທນຈໍາໜ່າຍ).

15. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລວມທັງເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ ທີ່ມີ ພຶດຕິກໍາລະເມີດ ກ່ຽວກັບການຄຸ້ມຄອງ, ການກໍານົດໂຄງປະກອບລາຄາ, ການຕິດ, ການປະ ກາດ ຫຼື ການໂຄສະນາລາຄາສິນຄ້າເປັນເງິນຕາຕ່າງປະເທດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 54 ແລະ 55 ຂອງກົດໝາຍ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 15/ສພຊ, ລົງ ວັນທີ 07 ກໍລະກົດ 2022 ປະຕິບັດມາດຕະການ ດັ່ງນີ້:

   - ການລະເມີດທີ່ມີລັກສະນະເບົາບາງ ແລະ ເປັນຄັ້ງທໍາອິດ ຈະຖືກສຶກສາອົບຮົມ, ກ່າວເຕືອນ ພ້ອມທັງບັນທຶກເປັນລາຍລັກອັກສອນ ກໍານົດໃຫ້ປັບປຸງປ່ຽນແປງພາຍໃນ 30 ວັນ.

- ເຈດຕະນາລະເມີດ ຫຼື ເປັນຄັ້ງທີສອງ ແມ່ນໃຫ້ປັບໃໝ ແຕ່ ສິບລ້ານກີບ ຫາຊາວລ້ານ ກີບ (10,000,000 ກີບ ຫາ 20,000,000 ກີບ).
- ກໍລະນີລະເມີດຊໍ້າ ໃຫ້ປັບໃໝສອງເທົ່າ ຂອງມູນຄ່າປັບໃໝຄັ້ງຫຼ້າສຸດ.

16. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີພຶດຕິກຳເປັນລະເມີດລະບຽບການ ແລະ ຂໍ້ຫ້າມ ກ່ຽວກັບການດຳເນີນທຸລະກິດນ້ຳມັນເຊື້ອໄຟ ຈະຖືກປະຕິບັດມາດຕະການ ກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ທາງອາຍາ ຕາມກໍລະນີໜັກ ຫຼື ເບົາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ຂ. ການດຳເນີນທຸລະກິດທີ່ບໍ່ຖືກຕ້ອງ.**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍ ວ່າດ້ວຍວິສາຫະກິດ ສະບັບເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022 ຈະຖືກປະຕິບັດຕາມມາດຕະການສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນທຸລະກິດບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການທີ່ກ່ຽວຂ້ອງ ຈະຖືກປະຕິບັດຕາມມາດຕະການສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ຄ. ການຄ້າສິນຄ້ານອກລະບົບ.**

ການຄ້າສິນຄ້ານອກລະບົບ ຈະຖືກສຶກສາອົບຮົມ ຫຼື ປັບໃໝ ດັ່ງນີ້:

1. ການນຳເອົາສິນຄ້າ ອອກ-ເຂົ້າ ບໍ່ຖືກຕາມດ່ານທີ່ໄດ້ບົ່ງໄວ້ໃນໃບອະນຸຍາດ ແຕ່ໄດ້ເສຍພັນທະຕ່າງໆ ຕາມລະບຽບກົດໝາຍຖືກຕ້ອງ ຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ປັບໃໝ ຄື:

- ມູນຄ່າສິນຄ້າຕ່ຳກວ່າ ຫ້າລ້ານກີບ (5,000,000 ກີບ) ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ;
- ມູນຄ່າສິນຄ້າ ແຕ່ ຫ້າລ້ານກີບ ຂຶ້ນໄປ ຫາ ສິບລ້ານກີບ (5,000,001 ກີບ ຫາ 10,000,000 ກີບ) ຈະຖືກປັບໃໝ ຫ້າສ່ວນຮ້ອຍ (5%) ຂອງມູນຄ່າສິນຄ້າ;
- ມູນຄ່າສິນຄ້າ ແຕ່ສິບລ້ານກີບຂຶ້ນໄປ (10,000,001 ກີບ) ຈະຖືກປັບໃໝ ສິບສ່ວນຮ້ອຍ ( 10%) ຂອງມູນຄ່າສິນຄ້າ.

2. ການລະເມີດລະບຽບການຄຸ້ມຄອງການນຳເຂົ້າ ແລະ ການສົ່ງອອກ ຕາມທີ່ໄດ້ກຳນົດໄວ້ໃນ ດຳລັດ ວ່າດ້ວຍການນຳເຂົ້າ ແລະ ສົ່ງອອກສິນຄ້າ ແລະ ດຳລັດ ວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ ຄື:

- ນຳເຂົ້າ ຫຼື ສົ່ງອອກສິນຄ້າ ທີ່ຢູ່ໃນລາຍການສິນຄ້າເກືອດຫ້າມນຳເຂົ້າ ຫຼື ການສົ່ງອອກ, ຍົກເວັ້ນໃນກໍລະນີ ທີ່ໄດ້ຮັບອະນຸຍາດ ຈາກລັດຖະບານ ແຫ່ງ ສປປ ລາວ;
- ນຳເຂົ້າ ຫຼື ສົ່ງອອກສິນຄ້າ ທີ່ຢູ່ໃນລາຍການທີ່ຕ້ອງຂໍອະນຸຍາດກ່ອນການນຳເຂົ້າ ຫຼື ສົ່ງອອກ ກ່ອນໄດ້ຮັບອະນຸຍາດ;
- ນຳເຂົ້າ ຫຼື ສົ່ງອອກສິນຄ້າ ທີ່ຢູ່ໃນລາຍການທີ່ຕ້ອງຜ່ານມາດຕະການສຸຂາອານາໄມ ແລະ ສຸຂານາໄມພືດ ຫຼື ລະບຽບການທາງດ້ານເຕັກນິກ ກ່ອນໄດ້ຜ່ານການກວດສອບ ຫຼື ຢັ້ງຢືນມາດຕະການສຸຂາອານາໄມ ຫຼື ສຸຂານາໄມພືດ ຫຼື ລະບຽບການທາງດ້ານເຕັກນິກ;
- ການປອມແປງ, ປ່ຽນແປງ ຫຼື ຊື້ຂາຍເອກະສານຕ່າງໆ ກ່ຽວກັບການຊື້-ຂາຍສິນຄ້າເປັນຕົ້ນ: ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ, ໃບອະນຸຍາດນຳເຂົ້າ-ສົ່ງອອກສິນຄ້າ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີການລະເມີດດັ່ງກ່າວມາໃນຂໍ້ 2 ເທິງນີ້ ຈະຖືກປັບໃໝ ສາມສິບສ່ວນຮ້ອຍ (30%) ຂອງມູນຄ່າສິນຄ້າ ແລະ ຕ້ອງໄດ້ປະຕິບັດພັນທະຕ່າງໆ ໃຫ້ຄົບຖ້ວນຕາມລະບຽບກົດໝາຍ;

ຖ້າມີການກະທຳຜິດ ຄັ້ງທີ ສອງ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່າສິນຄ້າ ແລະ ຕ້ອງໄດ້ປະຕິບັດພັນທະຕ່າງໆ ໃຫ້ຄົບຖ້ວນຕາມລະບຽບກົດໝາຍ;

ສິນຄ້າ, ເຄື່ອງຂອງ ພ້ອມທັງວັດຖຸສິ່ງຂອງທີ່ນຳໃຊ້ເພື່ອປິດບັງ ແລະ ພາຫະນະທີ່ນຳໃຊ້ເຂົ້າໃນການກະທຳຜິດ ທີ່ບໍ່ແມ່ນປະເພດສິນຄ້າຄວບຄຸມ ທີ່ຖືກຍຶດໄວ້ນັ້ນໃຫ້ສົ່ງຄືນເຈົ້າຂອງພາຍຫຼັງດຳເນີນການແກ້ໄຂແລ້ວ.

3. ການຊື້-ຂາຍ ສິນຄ້າທີ່ລັກລອບ ຫຼື ລົບຫຼີກ ລະບຽບການຄຸ້ມຄອງການຄ້າ ຄື:

- ການລັກລອບ ນຳເຂົ້າ-ສົ່ງອອກ ສິນຄ້າ, ການລົບຫຼີກພັນທະ ຫຼື ຄ່າທຳນຽມຕ່າງໆ ຫຼື ປະຕິບັດພັນທະ ຫຼື ຄ່າທຳນຽມບໍ່ເຕັມອັດຕາສ່ວນ ຈະຖືກປັບໃໝ ເຈັດສິບສ່ວນຮ້ອຍ (70%) ຂອງມູນຄ່າສິນຄ້າເຄື່ອງຂອງ ແລະ ຕ້ອງປະຕິບັດພັນທະຕ່າງໆ ຢ່າງຄົບຖ້ວນຕາມລະບຽບກົດໝາຍ;
- ຖ້າເປັນການກະທຳຜິດຄັ້ງ ທີສອງ ຈະຖືກປັບໃໝຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່າສິນຄ້າ, ເຄື່ອງຂອງ ແລະ ຕ້ອງປະຕິບັດພັນທະຕ່າງໆ ຢ່າງຄົບຖ້ວນຕາມລະບຽບກົດໝາຍ;
- ສິນຄ້າ, ເຄື່ອງຂອງ ພ້ອມທັງວັດຖຸສິ່ງຂອງທີ່ນຳໃຊ້ເພື່ອປິດບັງ ແລະ ພາຫະນະທີ່ນຳໃຊ້ເຂົ້າໃນການກະທຳຜິດ ທີ່ບໍ່ແມ່ນປະເພດສິນຄ້າຄວບຄຸມ ທີ່ຖືກຍຶດໄວ້ນັ້ນ ໃຫ້ສົ່ງຄືນເຈົ້າຂອງພາຍຫຼັງດຳເນີນການແກ້ໄຂແລ້ວ.
- ຖ້າຍັງມີການລະເມີດເປັນຄັ້ງທີສາມ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່າສິນຄ້າ, ເຄື່ອງຂອງ ສ່ວນສິນຄ້າ, ເຄື່ອງຂອງທີ່ຍຶດ ຫຼື ອາຍັດໄວ້ນັ້ນ ແມ່ນໃຫ້ຮິບເປັນຂອງລັດ.

4. ການຄ້າຂາຍສິນຄ້າປະເພດໄມ້ທີ່ຜິດລະບຽບກົດໝາຍ ຄື: ການຂາຍສິນຄ້າປະເພດໄມ້ຫວງຫ້າມທີ່ບໍ່ໄດ້ຮັບອະນຸຍາດ, ການຄ້າຂາຍໄມ້ປະເພດຕ່າງໆທີ່ບໍ່ມີເອກະສານ ຫຼື ເກີນຈຳນວນ, ເກີນບໍລິມາດໃນເອກະສານ, ການລັກລອບສົ່ງອອກສິນຄ້າປະເພດໄມ້ທ່ອນ, ໄມ້ແປຮູບ, ຕໍໄມ້, ປູດໄມ້ ຈະຖືກປັບໃໝ 1 ເທົ່າຕົວ ຂອງມູນຄ່າສິນຄ້າ ຫຼື ວັດຖຸທີ່ລະເມີດ ພ້ອມທັງຮິບສ່ວນທີ່ລະເມີດນັ້ນເປັນຂອງລັດ. ການຮິບເປັນຂອງລັດຕ້ອງປະຕິບັດຕາມກົດໝາຍອາຍາ ຫຼື ລະບຽບກົດໝາຍທີ່ກ່ຽວຂ້ອງ.

5. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີພຶດຕິກຳເປັນການລະເມີດລະບຽບການ ແລະ ຂໍ້ຫ້າມ ກ່ຽວກັບ ການຈຳໜ່າຍ, ການນຳເຂົ້າ-ສົ່ງອອກ, ສົ່ງຜ່ານ, ຊື້-ຂາຍຢາສູບໄຟຟ້າ, ຢາສູບລະເຫີຍອາຍ, ຢາສູບຊີຊາ ຫຼື ບາຣາກູ ແລະ ຢາສູບນອກລະບົບທຸກຮູບແບບ ຕາມກົດໝາຍວ່າດ້ວຍການຄວບຄຸມຢາສູບ ສະບັບເລກທີ 09/ສພຊ, ລົງວັນທີ 16 ພະຈິກ 2021, ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 12 ແລະ 13 ຂອງດຳລັດ ວ່າດ້ວຍການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ກັບການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ສະບັບເລກທີ 52/ລບ, ລົງວັນທີ 21 ກຸມພາ 2019 ຈະຖືກປັບໃໝດັ່ງນີ້:

5.1 ການຂາຍຜະລິດຕະພັນຢາສູບ ດ້ວຍເຄື່ອງຈັກອັດຕະໂນມັດ.

ບຸກຄົນ ຫຼື ນິຕິບຸກຄົນ ຫາກຂາຍຜະລິດຕະພັນຢາສູບ ດ້ວຍເຄື່ອງຈັກອັດຕະໂນມັດຈະຖືກປັບໃໝ ຫ້າລ້ານກີບ (5,000,000) ຕໍ່ເຄື່ອງ ພ້ອມທັງຍຶດ ແລະ ທຳລາຍຖິ້ມ.

ບຸກຄົນ ຫຼື ນິຕິບຸກຄົນ ຫາກນຳເຂົ້າ, ຂາຍ ຫຼື ຈຳໜ່າຍເຄື່ອງຈັກອັດຕະໂນມັດ ຂາຍຜະລິດຕະພັນຢາສູບ ຈະຖືກປັບໃໝ ສິບລ້ານກີບ (10,000,000) ຕໍ່ເຄື່ອງ ພ້ອມທັງຍຶດ ແລະ ທຳລາຍຖິ້ມ.

5.2 ການຜະລິດ, ນຳເຂົ້າ, ຈຳໜ່າຍ ຫຼື ຂາຍຢາຊອງ ທີ່ບັນຈຸຕໍ່າກວ່າ ຊາວກອກ, ຢາຊອງ ຫຼື ຢາກະປ໋ອງ ເປັນກອກ ແລະ ຜະລິດຕະພັນຢາສູບນອກລະບົບທຸກຮູບແບບ.

ບຸກຄົນ ຫຼື ນິຕິບຸກຄົນ ຫາກຜະລິດ, ນໍາເຂົ້າ ຫຼື ຈໍາໜ່າຍຢາຊອງ ທີ່ບັນຈຸຕໍ່າກວ່າຊາວກອກ ຈະຖືກປັບໃໝ ແລະ ມາດຕະການອື່ນ ດັ່ງນີ້:

1. ຄັ້ງທີ ໜຶ່ງ ຈະຖືກປັບໃໝ ສິບລ້ານກີບ (10,000,000 ກີບ);
2. ຄັ້ງທີ ສອງ ຈະຖືກປັບໃໝ ຊາວລ້ານກີບ (20,000,000 ກີບ);
3. ຄັ້ງທີ ສາມຂຶ້ນໄປ ຈະຖືກປັບໃໝ ຄັ້ງລະ ຫ້າສິບລ້ານ (50,000,000 ກີບ) ພ້ອມທັງສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງພິຈາລະນາໂຈະ ຫຼື ຖອນໃບອະນຸຍາດດໍາເນີນທຸລະກິດ.

ບຸກຄົນ ຫຼື ນິຕິບຸກຄົນ ຫາກຂາຍຢາຊອງ ຫຼື ຢາກະປ໋ອງເປັນກອກ ຈະຖືກປະຕິບັດມາດຕະການ ດັ່ງນີ້:

1. ຄັ້ງທີ ໜຶ່ງ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ;
2. ຄັ້ງທີ ສອງ ຈະຖືກປັບໃໝ ຊາວລ້ານກີບ (2,000,000 ກີບ);
3. ຄັ້ງທີ ສາມຂຶ້ນໄປ ຈະຖືກປັບໃໝ ຄັ້ງລະ ຫ້າລ້ານກີບ (5,000,000 ກີບ);

ບຸກຄົນ ຫຼື ນິຕິບຸກຄົນ ຫາກຜະລິດ, ນໍາເຂົ້າ ຫຼື ຈໍາໜ່າຍຢາສູບນອກລະບົບທຸກຮູບແບບ ຈະຖືກປັບໃໝ ແລະ ມາດຕະການອື່ນ ດັ່ງນີ້:

1. ຄັ້ງທີ ໜຶ່ງ ຈະຖືກປັບໃໝ ໜຶ່ງເທົ່າ ຂອງມູນຄ່າສິນຄ້າທັງໝົດ.
2. ຄັ້ງທີ ສອງ ຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າສິນຄ້າທັງໝົດ.
3. ຄັ້ງທີ ສາມ ຈະຖືກປັບໃໝ ສາມເທົ່າ ຂອງມູນຄ່າສິນຄ້າທັງໝົດ ພ້ອມທັງສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງພະຈາລະນາ ໂຈະ ຫຼື ຖອນໃບອະນຸຍາດດໍາເນີນທຸລະກິດ.

ສໍາລັບຜະລິດຕະພັນຢາສູບ ທີ່ຜະລິດ, ນໍາເຂົ້າ, ຈໍາໜ່າຍ ຫຼື ຂາຍຢາຊອງ ທີ່ບັນຈຸຕໍ່າກວ່າ ຊາວກອກ, ຢາຊອງ ຫຼື ຢາກະປ໋ອງເປັນກອກ ແລະ ຜະລິດຕະພັນຢາສູບນອກລະບົບທຸກຮູບແບບ ຈະຖືກຍຶດ ແລະ ທໍາລາຍຖິ້ມ.

6. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ດໍາເນີນທຸລະກິດ ທີ່ມີການລະເມີດກົດໝາຍ ແລະ ລະບຽບການດ້ານການຄ້າ, ການດໍາເນີນທຸລະກິດບໍ່ມີໃບທະບຽນວິສາຫະກິດ, ດໍາເນີນທຸລະກິດບໍ່ໄດ້ຮັບອະນຸຍາດ, ການຄ້າສິນຄ້ານອກລະບົບ ທີ່ມີການລະເມີດ ນອກຈາກການລະເມີດຢູ່ໃນຂໍ້ທີ 1,2,3,4 ແລະ 5 ຂອງມາດຕາ 20 ຂໍ້ ຄ ຂອງຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບທີ່ກ່ຽວຂ້ອງ.

**ງ. ກໍລະນີກະທໍາຜິດທາງແພ່ງ ຫຼື ອາຍາ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫາກມີການລະເມີດລະບຽບການ ດ້ານການຄ້າ, ການດໍາເນີນທຸລະກິດບໍ່ມີໃບທະບຽນວິສາຫະກິດ ຫຼື ບໍ່ຖືກວັດຖຸປະສົງ, ການຄ້າສິນຄ້ານອກລະບົບ ທີ່ບໍ່ສາມາດແກ້ໄຂທາງດ້ານບໍລິຫານ ເປັນການກະທໍາຜິດທາງແພ່ງ ຫຼື ອາຍາ ແມ່ນໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ແລະ ດໍາເນີນການ ຕາມຂັ້ນຕອນ ຂອງຂະບວນການຍຸຕິທໍາ.

**ຈ. ການລະເມີດ ກົດໝາຍ ແລະ ລະບຽບການດ້ານການຄ້າ ຮູບແບບອື່ນໆ.**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ດໍາເນີນທຸລະກິດ ທີ່ມີການລະເມີດກົດໝາຍ ແລະ ລະບຽບການດ້ານການຄ້າ ນອກຈາກການລະເມີດທີ່ກໍານົດໄວ້ໃນ ມາດຕາ 20 ຂອງຂໍ້ຕົກລົງສະບັບນີ້ ແມ່ນໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 21 ຫຼັກການຄິດໄລ່ອັດຕາປັບໃໝ**

ການປັບໃໝທາງບໍລິຫານ ໃຫ້ຄິດໄລ່ຕາມແຕ່ລະກໍລະນີ ດັ່ງນີ້:

1. ການລະເມີດລະບຽບການ ດ້ານການຄ້າ ທີ່ມີລັກສະນະເບົາບາງ ທີ່ບໍ່ເປັນການກະທຳຜິດທາງອາຍາ, ພາຍຫຼັງທີ່ໄດ້ກ່າວເຕືອນ, ສຶກສາອົບຮົມແລ້ວ ແຕ່ຍັງສືບຕໍ່ລະເມີດ ແມ່ນໃຫ້ຄິດໄລ່ຄ່າປັບໃໝ ໃນມູນຄ່າຕ່ຳສຸດ ທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ຍົກເວັ້ນລະບຽບກົດໝາຍໄດ້ກຳນົດເປັນຢ່າງອື່ນ.

ຕົວຢ່າງ: ການຄິດໄລ່ມູນຄ່າປັບໃໝ ກໍລະນີບໍ່ຕິດປ້າຍລາຄາມີໂທດປັບໃໝແຕ່ ຫ້າແສນກີບ ຫາ ໜຶ່ງ ລ້ານກີບ (500,000 ກີບ ຫາ 1,000,000 ກີບ) ຕໍ່ຄັ້ງ ຕໍ່ລາຍການ;

ການຄິດໄລ່ມູນຄ່າປັບໃໝໃນມູນຄ່າຕ່ຳສຸດຄື: ຫ້າແສນກີບ (500,000 ກີບ) ຕໍ່ຄັ້ງ ຕໍ່ລາຍການ.

2. ກໍລະນີປັບໃໝແລ້ວ ຍັງສືບຕໍ່ລະເມີດ ແມ່ນໃຫ້ຄິດໄລ່ຄ່າປັບໃໝໃນລະດັບກາງ, ການຄິດໄລ່ ແມ່ນໃຫ້ເອົາມູນຄ່າປັບໃໝຕ່ຳສຸດ ບວກໃຫ້ມູນຄ່າສູງສຸດ ແລ້ວຫານສອງ ຍົກເວັ້ນລະບຽບກົດໝາຍໄດ້ກຳນົດ ເປັນຢ່າງອື່ນ.

ຕົວຢ່າງ: ການຄິດໄລ່ມູນຄ່າປັບໃໝ ກໍລະນີບໍ່ຕິດປ້າຍລາຄາມີໂທດປັບໃໝແຕ່ ຫ້າແສນກີບ ຫາ ໜຶ່ງ ລ້ານກີບ (500,000 ກີບ ຫາ 1,000,000 ກີບ) ຕໍ່ຄັ້ງ ຕໍ່ລາຍການ;

ການຄິດໄລ່ຄ່າປັບໃໝລະດັບກາງຂອງມູນຄ່າ:

ຄ່າປັບໃໝແມ່ນ: (500,000 ກີບ + 1,000,000 ກີບ) / 2 = 750,000 ກີບ/ຄັ້ງ/ລາຍການ.

3. ກໍລະນີ ການລະເມີດ ເປັນການລະເມີດຊ້ຳຊ້ອນກັນຫຼາຍເທື່ອ ມີລັກສະນະເປັນອາຈິນ ແມ່ນໃຫ້ ຄິດໄລ່ຄ່າປັບໃໝໃນມູນຄ່າສູງສຸດ ທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ຍົກເວັ້ນກົດໝາຍໄດ້ກຳນົດເປັນຢ່າງອື່ນ.

ຕົວຢ່າງ: ການຄິດໄລ່ມູນຄ່າປັບໃໝ ກໍລະນີບໍ່ຕິດປ້າຍລາຄາມີໂທດປັບໃໝແຕ່ ຫ້າແສນກີບ ຫາ ໜຶ່ງ ລ້ານກີບ (500,000 ກີບ ຫາ 1,000,000 ກີບ) ຕໍ່ຄັ້ງ, ຕໍ່ລາຍການ.

ການຄິດໄລ່ຄ່າປັບໃໝໃນມູນຄ່າສູງສຸດ:

ການຄິດໄລ່ມູນຄ່າປັບໃໝແມ່ນ: 1,000,000 ກີບ/ຄັ້ງ/ລາຍການ.

ສຳລັບກໍລະນີທີ່ມີຕົວເລກຊັດເຈນ ຫຼື ເປັນສ່ວນຮ້ອຍ ທີ່ກຳນົດໄວ້ໃນລະບຽບການສະເພາະ ແມ່ນ ໃຫ້ຄິດໄລ່ຕາມນັ້ນເລີຍ.

ຕົວຢ່າງ: ການລະເມີດບໍ່ມີໃບອະນຸຍາດນຳເຂົ້າສິນຄ້າ ຖືກປັບໃໝ 30% ຂອງມູນຄ່າສິນຄ້າທີ່ ລະເມີດ (ມູນຄ່າສິນຄ້າແມ່ນ: 10,000,000 ກີບ).

ການຄິດໄລ່ມູນຄ່າປັບໃໝແມ່ນ: 10,000,000 ກີບ x 30% = 3,000,000 ກີບ.

## ໝວດທີ 6
## ການຈັດຕັ້ງປະຕິບັດ

**ມາດຕາ 22 ງົບປະມານ**

ການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ມີງົບປະມານ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກ ງານຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງການຈັດຕັ້ງປະຕິບັດວຽກງານກວດກາການຄ້າ.

**ມາດຕາ 23 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມແຂ່ງຂັນທາງທຸລະກິດ ແລະ ກວດການຄ້າ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ເປັນເຈົ້າການໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອພ້ອມກັນຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 24 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ປ່ຽນແທນ ຂໍ້ຕົກລົງ ວ່າດ້ວຍການປະຕິບັດວຽກງານກວດການຄ້າ ສະບັບເລກທີ 1499/ອຄ.ກຄພນ, ລົງວັນທີ 08 ກັນຍາ 2017.

**ລັດຖະມົນຕີ**

ມະໄລທອງ ກົມມະສິດ